ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ກົດລະບຽບ
# ຂອງແນວລາວສ້າງຊາດ ສະໄໝທີ XI

- ແນວລາວສ້າງຊາດ ໄດ້ສືບທອດມູນເຊື້ອອັນມີກຽດສະຫງ່າ ຂອງແນວລາວອິດສະຫຼະ ແລະ ແນວລາວຮັກຊາດ ໃນເມື່ອກ່ອນ, ຜ່ານຫຼາຍໄລຍະແຫ່ງການເຄື່ອນໄຫວ, ອົງການແນວລາວສ້າງຊາດ ໄດ້ເສີມຂະຫຍາຍນ້ຳໃຈຮັກຊາດ, ມູນເຊື້ອສາມັກຄີ ປອງດອງ ຂອງທົ່ວປວງຊົນລາວທັງຊາດ; ຄວາມສາມັກຄີ ແມ່ນຍຸດທະສາດອັນພື້ນຖານ, ສະເໝີຕົ້ນສະເໝີປາຍ ແລະ ຍາວນານ, ເປັນປັດໃຈຕັດສິນໄຊຊະນະຂອງການປະຕິວັດ, ແມ່ນຍຸດທະສາດ ເພື່ອເຕົ້າໂຮມກຳລັງແຮງ ຂອງທົ່ວປວງຊົນ ເຂົ້າຮ່ວມໃນການຕໍ່ສູ້ປົດປ່ອຍຊາດ ກໍ່ຄືພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕາມທິດສັງຄົມນິຍົມ ທີ່ພັກປະຊາຊົນລາວກຳນົດໄວ້.

- ແນວລາວສ້າງຊາດ ໄດ້ເສີມຂະຫຍາຍມູນເຊື້ອຮັກຊາດ ແລະ ຮັກລະບອບປະຊາທິປະໄຕປະຊາຊົນ, ສ້າງຄວາມເອກ ອ້າງທະນົງໃຈ ຕໍ່ ຊາດ, ສ້າງສະຕິຊາດ ເອກະພາບ ອັນໜຶ່ງອັນດຽວ, ເສີມສ້າງນ້ຳໃຈຮັກຊາດ ຮັກຄວາມຍຸຕິທຳ, ສະກັດກັ້ນ ຕໍ່ການສ້າງຄວາມແຕກແຍກ ຄວາມສາມັກຄີ ລະຫວ່າງ ພັກ, ລັດ ກັບປະຊາຊົນ ແລະ ຄວາມສາມັກຄີປອງດອງ ລະຫວ່າງ ຊົ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ແລະ ຊາວຕ່າງປະເທດ ຢູ່ ສປປ ລາວ; ສາມັກຄີກັບຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ຜູ້ທີ່ມີນ້ຳໃຈຮັກຊາດ, ເຫັນດີ ເຫັນພ້ອມ ນຳພາລະກິດປ່ຽນແປງໃໝ່ຂອງພັກ.

- ຄຸນລັກສະນະ ຂອງກົດລະບຽບ ສະບັບປັບປຸງນີ້ ເປັນການຈັດຕັ້ງຜັນຂະຫຍາຍແນວຄິດຊີ້ນາຂອງພັກ ກ່ຽວກັບວຽກງານແນວໂຮມໃນໄລຍະໃໝ່ ທີ່ແນໃສ່ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນຂອງທົ່ວປວງຊົນລາວທັງຊາດ, ເຕົ້າໂຮມກຳລັງແຮງຂອງມະຫາຊົນ ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນພາລະກິດປົກປັກຮັກສາ - ສ້າງສາປະເທດຊາດ, ນຳເອົາຜົນປະໂຫຍດມາໃຫ້ປະເທດຊາດ ແລະ ປະຊາຊົນ, ທັງສ້າງການຫັນປ່ຽນໃໝ່ ແລະ ຮັບປະກັນໃຫ້ການເຄື່ອນໄຫວ ຂອງແນວລາວສ້າງຊາດ ສອດຄ່ອງ ກັບ ລັດຖະທຳມະນູນ ແລະ ກົດໝາຍ ວ່າດ້ວຍແນວລາວສ້າງຊາດ ທີ່ໄດ້ກຳນົດໄວ້.

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດລະບຽບສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ເນື້ອໃນ, ຮູບການ ແລະ ວິທີການເຄື່ອນໄຫວວຽກງານ ຂອງແນວລາວສ້າງຊາດ ເພື່ອແນໃສ່ ເສີມຂະຫຍາຍມູນເຊື້ອອັນດີງາມ ຂອງແນວລາວສ້າງຊາດ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ ຂອງປວງຊົນລາວທັງຊາດ, ເຕົ້າໂຮມກຳລັງແຮງຂອງປະຊາຊົນ, ຊົ້ນຄົນ, ປະກອບສ່ວນ

ຢ່າງແຂງແຮງ ເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 2 ແນວລາວສ້າງຊາດ**

ແນວລາວສ້າງຊາດ ແມ່ນ ອົງການຈັດຕັ້ງສຳພັນທາງການເມືອງ ຂອງທົ່ວສັງຄົມ, ເປັນສະຫະພັນຂອງອົງການຈັດຕັ້ງການເມືອງ, ອົງການຈັດຕັ້ງການເມືອງ-ສັງຄົມ, ອົງການຈັດຕັ້ງສັງຄົມ, ບຸກຄົນທີ່ເປັນຕົວແທນໃຫ້ແກ່ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ລວມທັງຕົວແທນຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ບົນພື້ນຖານຄວາມຕື່ນຕົວ ແລະ ສະໝັກໃຈ.

**ມາດຕາ 3 ຫຼັກການ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ຈັດຕັ້ງ ແລະ ເຄື່ອນໄຫວ ບົນພື້ນຖານຫຼັກການ ຕົ້ນຕໍ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍຕ່າງໆ ແລະ ກົດໝາຍ, ກົດລະບຽບ ຂອງແນວລາວສ້າງຊາດ;
2. ລວມສູນປະຊາທິປະໄຕ, ປຶກສາຫາລື, ປະສານສົມທົບ ແລະ ເປັນເອກະພາບ ໃນການ ເຄື່ອນໄຫວ;
3. ຕື່ນຕົວ, ສະໝັກໃຈ ແລະ ເປັນແບບຢ່າງ ໃນການເຄື່ອນໄຫວວຽກງານ.

**ມາດຕາ 4 ຂອບເຂດການນຳໃຊ້**

ກົດລະບຽບສະບັບນີ້ ນຳໃຊ້ສຳລັບ ແນວລາວສ້າງຊາດ, ກຳມະການແນວລາວສ້າງຊາດ, ພາຄີ, ຄະນະທີ່ປຶກສາ, ທີ່ປຶກສາ ແລະ ຄູ່ຮ່ວມງານ, ພະນັກງານ ແລະ ລັດຖະກອນ ຂອງແນວລາວສ້າງຊາດ ທຸກຂັ້ນ.

## ໝວດທີ II
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ

**ມາດຕາ 5 ທີ່ຕັ້ງ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ເປັນ ພາກສ່ວນໜຶ່ງໃນລະບົບການເມືອງ ແຫ່ງ ສປປ ລາວ ໂດຍແມ່ນພັກປະຊາຊົນປະຕິວັດລາວ ເປັນແກນນຳ ແລະ ເປັນພື້ນຖານການເມືອງໜຶ່ງ ຂອງລະບອບປະຊາທິປະໄຕປະຊາຊົນ; ສືບທອດ ແລະ ເສີມຂະຫຍາຍມູນເຊື້ອ ອັນສະຫງ່າລາສີ ຂອງແນວລາວອິດສະຫຼະ ແລະ ແນວລາວຮັກຊາດ ໃນເມື່ອກ່ອນ.

**ມາດຕາ 6 ພາລະບົດບາດ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ມີພາລະບົດບາດ ຕົ້ນຕໍ ດັ່ງນີ້:

1. ເປັນຫຼັກແຫຼ່ງ ເຕົ້າໂຮມຄວາມສາມັກຄີປອງດອງ ຄວາມເປັນປຶກແຜ່ນ ຂອງປະຊາຊົນບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ລວມທັງຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ;
2. ສຶກສາອົບຮົມ, ປຸກລະດົມ, ຂົນຂວາຍ ແລະ ເສີມຂະຫຍາຍ ສິດເປັນເຈົ້າ ຂອງປະຊາຊົນ;

3. ເສີມຂະຫຍາຍສິດເປັນເຈົ້າ ແລະ ປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງປະຊາຊົນ, ຕິດຕາມ ແລະ ໃຫ້ຄຳປຶກສາ ໃນການປະຕິບັດ ສິດ, ໜ້າທີ່, ການປະຕິບັດ ກົດໝາຍ ແລະ ລະບຽບການ ຂອງອົງການ ພາຄີ.

4. ຕິດຕາມ ແລະ ໃຫ້ຄຳປຶກສາ, ສະເໜີແນະ ຕໍ່ ການຈັດຕັ້ງການເມືອງ-ສັງຄົມ, ບຸກຄົນ ແລະ ນິຕິບຸກຄົນ ໃນການເຄື່ອນໄຫວ ຂອງອົງການອຳນາດລັດ.

**ມາດຕາ 7 ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຕົ້າໂຮມຄວາມສາມັກຄີປອງດອງ ປະຊາຊົນບັນດາເຜົ່າ ທັງຢູ່ພາຍໃນ ແລະ ຕ່າງປະເທດ;

2. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ເປັນແຜນການ, ແຜນງານ, ໂຄງການ ຂອງລັດໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ສະເໜີ ສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງຕົນ;

4. ໂຄສະນາ, ສຶກສາອົບຮົມ, ປຸກລະດົມ, ເສີມຂະຫຍາຍສິດເປັນເຈົ້າ ຂອງປະຊາຊົນບັນດາເຜົ່າ ໃນການປະຕິບັດແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ ແລະ ສັງຄົມ ໃນແຕ່ລະໄລຍະ;

5. ຕິດຕາມ ແລະ ໃຫ້ຄຳປຶກສາ ຕໍ່ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກຂອງສະພາດັ່ງກ່າວ, ອົງການບໍລິຫານ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ທະຫານ, ຕຳຫຼວດ, ສະມາຊິກພັກ, ພະນັກງານ ແລະ ລັດຖະກອນ ລວມທັງພະນັກງານລັດວິສາຫະກິດ ຕາມຖາມສຽງ ຂອງປະຊາຊົນບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ເພື່ອພິຈາລະນາແກ້ໄຂ;

6. ເຂົ້າຮ່ວມການປັບປຸງ, ບູລະນະອຳນາດລັດປະຊາທິປະໄຕປະຊາຊົນຂັ້ນຂອງຕົນ;

7. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ, ພາຄີ ແລະ ຂອງປະຊາຊົນບັນດາເຜົ່າ, ໃຫ້ຄຳປຶກສາ, ແນະນຳ ແລະ ເຂົ້າຮ່ວມການໄກ່ເກ່ຍແກ້ໄຂຂໍ້ຂັດແຍ່ງ ຕາມພາລະບົດບາດຂອງຕົນ;

8. ປົກປັກຮັກສາ, ເສີມຂະຫຍາຍມູນເຊື້ອຮັກຊາດ, ຄຸນຄ່າວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ ແລະ ເຜົ່າ;

9. ຖ່າຍທອດຄວາມຮູ້, ບົດຮຽນ, ປະສົບການ ແລະ ມູນເຊື້ອອັນດີງາມ ຂອງແນວລາວອິດສະຫຼະ, ແນວລາວຮັກຊາດ, ແນວລາວສ້າງຊາດ ໃຫ້ແກ່ຄົນຮຸ່ນຫຼັງ;

10.ສະເໜີບຸກຄະລາກອນຂອງຕົນ, ປະກອບຄຳເຫັນຕໍ່ບຸກຄະລາກອນ ຂອງພາກສ່ວນອື່ນ ທີ່ເປັນຕົວແທນ ຂອງປະຊາຊົນບັນດາເຜົ່າ ອອກສະໝັກຮັບເລືອກຕັ້ງ ເຂົ້າໃນອົງການນຳພາຂອງພັກ, ອົງການຈັດຕັ້ງການເມືອງ-ສັງຄົມ, ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການຈັດຕັ້ງອື່ນ ຕາມລະບຽບການ;

11. ປະສານສົມທົບ, ຮ່ວມມື ກັບພາກສ່ວນກ່ຽວຂ້ອງອື່ນໆ ເພື່ອອຳນວຍຄວາມສະດວກ ໃຫ້ການເຄື່ອນໄຫວວຽກງານແນວໂຮມ;

12. ເສີມຂະຫຍາຍ ການທູດປະຊາຊົນ, ສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງປະຊາຊົນບັນດາເຜົ່າ ກັບປະຊາຊົນບັນດາປະເທດ ໃນພາກພື້ນ ແລະ ສາກົນ;

13. ສ້າງລາຍຮັບ ດ້ວຍການຮ່ວມມື ກັບບຸກຄົນ ແລະ ນິຕິບຸກຄົນ; ຄຸ້ມຄອງ, ນຳໃຊ້ຊັບສົມບັດ, ງົບປະມານ, ແຫລ່ງລາຍຮັບຕ່າງໆ ໃຫ້ ໂປ່ງໃສ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

14. ສະຫຼຸບ, ລາຍງານ ການເຄື່ອນໄຫວ ວຽກງານແນວໂຮມ ຕາມລະບຽບການ ຢ່າງເປັນປົກກະຕິ;

15. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຄໍາຮຽກຮ້ອງຂອງພັກ.

## ໝວດທີ III
## ຄະນະກໍາມະການ, ຄະນະປະຈໍາ, ຄະນະຕິດຕາມກວດກາ, ສາຍໃຍ ແລະ ໂຄງປະກອບກົງຈັກການຈັດຕັ້ງ ຂອງແນວລາວສ້າງຊາດ

### ມາດຕາ 8 ຄະນະກໍາມະການແນວລາວສ້າງຊາດ

ຄະນະກໍາມະການແນວລາວສ້າງຊາດແຕ່ລະຂັ້ນ ແມ່ນ ບຸກຄົນທີ່ເປັນຕົວແທນ ມາຈາກຂົງເຂດ ອົງການຈັດຕັ້ງການເມືອງ, ອົງການຈັດຕັ້ງການເມືອງ-ສັງຄົມ, ການຈັດຕັ້ງສັງຄົມ, ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ລວມທັງຕົວແທນຄົນເຊື້ອຊາດລາວ ທີ່ດໍາລົງຊີວິດຢູ່ຕ່າງປະເທດ ບົນພື້ນຖານຄວາມຕື່ນຕົວ ແລະ ສະໝັກໃຈ.

ຄະນະກໍາມະການແນວລາວສ້າງຊາດແຕ່ລະຂັ້ນ ແມ່ນ ກອງປະຊຸມໃຫຍ່ ຫຼື ກອງປະຊຸມສະໄໝສາມັນ ແນວລາວສ້າງຊາດຂັ້ນນັ້ນ ປຶກສາຫາລື, ຮັບຮອງເອົາ ຄະນະກໍາມະການ, ປະທານ, ຮອງປະທານ, ຄະນະປະຈໍາ, ຄະນະຕິດຕາມ ແລະ ໃຫ້ຄໍາປຶກສາ ຂອງແນວລາວສ້າງຊາດ ໂດຍໄດ້ຮັບການຊີ້ນໍາ, ເຫັນດີເຫັນພ້ອມ ຈາກ ຄະນະປະຈໍາພັກຂັ້ນນັ້ນ ແລະ ຄະນະກໍາມະການແນວລາວສ້າງຊາດຂັ້ນເທິງຖັດ.

ຄະນະກໍາມະການແນວລາວສ້າງຊາດຢູ່ແຕ່ລະຂັ້ນ ແມ່ນອົງການປະຕິບັດວຽກງານ ລະຫວ່າງສອງສະໄໝກອງປະຊຸມໃຫຍ່ ແນວລາວສ້າງຊາດ ຂັ້ນຂອງຕົນ.

ໃນລະຫວ່າງ ສອງສະໄໝກອງປະຊຸມໃຫຍ່ ແນວລາວສ້າງຊາດ ແຕ່ລະຂັ້ນ ຄະນະກໍາມະການແນວລາວສ້າງຊາດ ມີສິດສະເໜີແຕ່ງຕັ້ງ ແລະ ຮັບຮອງເອົາກໍາມະການແນວລາວສ້າງຊາດ ເພື່ອປ່ຽນແທນ ຫຼື ເພີ່ມຕື່ມ ຫາກເຫັນວ່າມີຄວາມຈໍາເປັນ, ແຕ່ບໍ່ໃຫ້ກາຍໜຶ່ງສ່ວນສາມຂອງຈໍານວນທີ່ມີແລ້ວ ໂດຍຜ່ານການເຫັນດີເຫັນພ້ອມ ຂອງຄະນະປະຈໍາພັກ ຂັ້ນຂອງຕົນ. ກໍາມະການແນວລາວສ້າງຊາດ ຂັ້ນ ສູນກາງ, ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ ແມ່ນ ຈະໄດ້ຮັບການມອບໝາຍ ເຂົ້າໃນຄະນະທີ່ປຶກສາວຽກງານແນວໂຮມ ຢູ່ຂັ້ນຂອງຕົນ.

ຄະນະກໍາມະການແນວລາວສ້າງຊາດ ແຕ່ລະຂັ້ນ ມີໂຄງປະກອບ ດັ່ງນີ້:

1. ປະທານ, ຮອງປະທານ ແນວລາວສ້າງຊາດ;
2. ຫົວໜ້າ ຫຼື ຮອງຫົວໜ້າ ອົງການຈັດຕັ້ງການເມືອງ-ສັງຄົມ;
3. ຫົວໜ້າ ຫຼື ຮອງຫົວໜ້າ ອົງການຈັດຕັ້ງສັງຄົມ;
4. ບັນດາ ຫົວໜ້າກົມ, ຫົວໜ້າຂະແໜງການ ແນວລາວສ້າງຊາດ ຈໍານວນໜຶ່ງ;
5. ບຸກຄົນທີ່ເປັນຕົວແທນ ໃຫ້ແກ່ ຊົນເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ແລະ ນັກທຸລະກິດ;
6. ຕົວແທນຄົນເຊື້ອຊາດລາວ ທີ່ດາລົງຊີວິດຢູ່ຕ່າງປະເທດ.

ສຳລັບເງື່ອນໄຂ ຂອງຄະນະກຳມະການແນວລາວສ້າງຊາດ ແມ່ນໄດ້ກຳນົດໄວ້ ຢູ່ໃນພາກທີ II, ໝວດທີ 2, ມາດຕາ 13 ຂອງກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ.

**ມາດຕາ 9 ສິດ ແລະ ໜ້າທີ່ ກຳມະການແນວລາວສ້າງຊາດ**

ສິດ ແລະ ໜ້າທີ່ ຂອງຄະນະກຳມະການແນວລາວສ້າງຊາດ ແມ່ນໄດ້ກຳນົດໄວ້ ຢູ່ໃນພາກທີ II, ໝວດທີ 2, ມາດຕາ 14 ຂອງກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ.

ສຳລັບ ກຳມະການແນວລາວສ້າງຊາດ ຢູ່ ຕ່າງປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຕົ້າໂຮມຄວາມສາມັກຄີ ຄົນເຊື້ອຊາດລາວ ທີ່ດຳລົງຊີວິດ ຢູ່ ຕ່າງປະເທດ ໃຫ້ມີຄວາມສາມັກຄີປອງດອງກັນ;

2. ປຸກລະດົມ ຄົນເຊື້ອຊາດລາວ ທີ່ດາລົງຊີວິດຢູ່ ຕ່າງປະເທດ ເພື່ອປະກອບສ່ວນໃນການສ້າງສາພັດທະນາບ້ານເກີດເມືອງນອນ;

3. ເຂົ້າຮ່ວມກອງປະຊຸມຕ່າງໆ ຕາມການເຊື້ອເຊີນ;

4. ປະສານສົມທົບ, ພົວພັນຮ່ວມມື ແລະ ສະຫຼຸບລາຍງານ ການເຄື່ອນໄຫວວຽກງານແນວໂຮມ ກັບສະຖານທູດລາວ ທີ່ປະເທດຕົນອາໄສຢູ່ ແລະ ຄະນະປະຈຳສູນກາງແນວລາວສ້າງຊາດ;

5. ໃນກໍລະນີ ຫາກມີຄວາມຈາເປັນ ກາມະການສູນກາງແນວລາວສ້າງຊາດ ຢູ່ຕ່າງປະເທດ ມີສິດສະເໜີ ຂໍສ້າງຕັ້ງຄູ່ຮ່ວມງານ ທີ່ເຮັດວຽກງານແນວໂຮມ ບ່ອນທີ່ປະເທດຕົນອາໄສຢູ່ ໂດຍຜ່ານການເຫັນດີ ຈາກສູນກາງແນວລາວສ້າງຊາດ, ສະຖານທູດລາວ ແລະ ຖືກຕ້ອງຕາມກົດໝາຍ ຂອງປະເທດນັ້ນ.

**ມາດຕາ 10 ການສິ້ນສຸດການເປັນກຳມະການແນວລາວສ້າງຊາດ**

ການເປັນກຳມະການແນວລາວສ້າງຊາດຈະສິ້ນສຸດລົງໃນກໍລະນີດັ່ງນີ້:

1. ໝົດສະໄໝກອງປະຊຸມໃຫຍ່;

2. ຍົກຍ້າຍໄປຮັບໜ້າທີ່ໃໝ່ (ໝາຍເຖິງ ການໝົດສິດ ຈາກການເປັນຕົວແທນອົງການຈັດຕັ້ງ ແລະ ບຸກຄົນທີ່ເປັນພາຄີ);

3. ຖືກປະຕິບັດວິໄນ ແລະ ຖືກສານຕັດສິນລົງໂທດຕັດອິດສະລະພາບ;

4. ຖືກປົດຈາກໜ້າທີ່ຕາແໜ່ງ;

5. ລາອອກ;

6. ເສຍຊີວິດ.

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງ ປະທານ, ຮອງປະທານປະຈຳການ ຄະນະກຳມະການແນວລາວສ້າງຊາດ**

ສຳລັບ ສິດ ແລະ ໜ້າທີ່ ປະທານ, ຮອງປະທານປະຈຳການ ຂອງຄະນະກຳມະການແນວລາວສ້າງຊາດ ແມ່ນໄດ້ກຳນົດໄວ້ ຢູ່ໃນພາກທີ II, ໝວດທີ 2, ມາດຕາ 15, 16 ຂອງກົດໝາວຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ.

**ມາດຕາ 12 ເງື່ອນໄຂ ຂອງຮອງປະທານ ຄະນະກາມະການແນວລາວສ້າງຊາດ ບໍ່ປະຈາການ**

ຮອງປະທານຄະນະກຳມະການແນວລາວສ້າງຊາດບໍ່ປະຈຳການ ມີເງື່ອນໄຂ ດັ່ງນີ້:

1. ເປັນພະນັກງານປະຕິວັດອາວຸໂສບໍານານ ຫຼື ບຸກຄົນທີ່ເປັນຕົວແທນ ໃຫ້ແກ່ ນັກຮຽນຮູ້ປັນຍາຊົນ, ຊັ້ນຄົນ, ນັກທຸລະກິດ ທີ່ມີຄວາມເຫັນດີເຫັນພ້ອມ;

2. ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສົນທໍາປະຕິວັດ, ມີຄວາມສັດຊື່ບໍລິສຸດ, ມີນໍ້າ ໃຈເສຍສະຫຼະ ເພື່ອຜົນປະໂຫຍດສ່ວນລວມ, ມີທັດສະນະມະຫາຊົນກວ້າງຂວາງ ແລະ ໄດ້ຮັບຄວາມເຊື່ອຖືຈາກມະຫາຊົນ;

3.ມີຄຸນວຸດທິ, ມີບົດບາດ, ມີຄວາມຮູ້ຄວາມສາມາດ, ມີບົດຮຽນປະສົບການໃນການນໍາພາ ແລະຄຸ້ມຄອງ, ສຶກສາອົບຮົມ ແລະ ເຕົ້າໂຮມຄວາມສາມັກຄີປະຊາຊົນບັນດາເຜົ່າ;

4. ມີສຸຂະພາບດີ;

5. ຜູ້ທີ່ເປັນ ກາມະການແນວລາວສ້າງຊາດ.

**ມາດຕາ 13 ສິດ ແລະ ໜ້າທີ່ ຂອງຮອງປະທານ ຄະນະກາມະການແນວລາວສ້າງຊາດ ບໍ່ປະຈາການ**

ຮອງປະທານ ຄະນະກໍາມະການແນວລາວສ້າງຊາດ ບໍ່ປະຈໍາການ ແຕ່ລະຂັ້ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປຶກສາຫາລື, ປະສານສົມທົບ ກ່ຽວກັບ ວຽກງານແນວລາວສ້າງຊາດ ກັບ ອົງການຈັດຕັ້ງພັກ, ລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ນັກຮຽນປັນຍາຊົນ ແລະ ຊັ້ນຄົນຕ່າງໆ;

2. ປະກອບຄໍາເຫັນ, ສະເໜີບັນຫາຕ່າງໆ ກ່ຽວກັບ ແນວທາງຂອງພັກ, ນະໂຍບາຍ, ກົດໝາຍ ແລະ ລະບຽບການຂອງລັດ ທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງປະຊາຊົນບັນດາເຜົ່າ;

3. ຕິດຕາມ ແລະ ໃຫ້ຄໍາປຶກສາ ການເຄື່ອນໄຫວວຽກງານ ຂອງແນວລາວສ້າງຊາດຂັ້ນສູນກາງ ແລະ ທ້ອງຖິ່ນ;

4. ເກັບກໍາຂໍ້ມູນ ຂ່າວສານ, ຄວາມມຸ່ງມາດປາຖະໜາ ຂອງປະຊາຊົນບັນດາເຜົ່າ, ຄວາມຂັດຂ້ອງໝອງໃຈຂອງສັງຄົມ ຕໍ່ການຈັດຕັ້ງປະຕິບັດແນວທາງຂອງພັກ, ນະໂຍບາຍ ແລະ ກົດໝາຍ ຂອງລັດ;

5. ລາຍງານສະພາບ ການເຄື່ອນໄຫວຂອງຕົນ ຕໍ່ປະທານແນວລາວສ້າງຊາດ ຢ່າງເປັນປົກກະຕິ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງປະທານແນວລາວສ້າງຊາດ.

**ມາດຕາ 14 ຄະນະປະຈໍາຄະນະກໍາມະການແນວລາວສ້າງຊາດ**

ຄະນະປະຈໍາຄະນະກໍາມະການແນວລາວສ້າງຊາດແຕ່ລະຂັ້ນ ແມ່ນ ການຈັດຕັ້ງທີ່ປະຈໍາການ ຂອງແນວລາວສ້າງຊາດ ຊຶ່ງເຮັດບົດບາດປະຕິບັດໜ້າທີ່ແທນ ຄະນະກໍາມະການແນວລາວສ້າງຊາດ ໃນໄລຍະທີ່ບໍ່ເປີດກອງປະຊຸມສາມັນປະຈໍາປີ.

ຄະນະປະຈໍາຄະນະກໍາມະການແນວລາວສ້າງຊາດ ຂັ້ນສູນກາງ, ຂັ້ນແຂວງ, ນະຄອນຫຼວງ, ຂັ້ນເມືອງ, ເທດສະບານ ແລະ ນະຄອນ ປະກອບ ມີດັ່ງນີ້:

1. ຂັ້ນສູນກາງ ປະກອບ ມີ ປະທານ, ຮອງປະທານ ແລະ ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າສູນຝຶກອົບຮົມ ທີ່ເປັນກໍາມະການສູນກາງແນວລາວສ້າງຊາດ;

2. ຂັ້ນແຂວງ, ນະຄອນຫຼວງ ປະກອບ ມີ ປະທານ, ຮອງປະທານ ແລະ ຫົວໜ້າຂະແໜງການ ຂອງແນວລາວສ້າງຊາດແຂວງ, ນະຄອນຫຼວງ ທີ່ເປັນກໍາມະການແນວລາວສ້າງຊາດ;

3. ຂັ້ນເມືອງ, ເທດສະບານ ແລະ ນະຄອນ ປະກອບ ມີ ປະທານ, ຮອງປະທານ, ຫົວໜ້າໜ່ວຍງານ ຂອງແນວລາວສ້າງຊາດເມືອງ, ເທດສະບານ, ນະຄອນ ທີ່ເປັນກໍາມະການແນວລາວສ້າງຊາດ.

ສໍາລັບ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະປະຈໍາ ຄະນະກໍາມະການແນວລາວສ້າງຊາດ ແມ່ນໄດ້ກໍານົດໄວ້ ຢູ່ໃນ ພາກທີ II, ໝວດທີ 2, ມາດຕາ 17, 18 ຂອງກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ.

### ມາດຕາ 15 ຄະນະຕິດຕາມ ແລະ ໃຫ້ຄໍາປຶກສາ ຂອງແນວລາວສ້າງຊາດ

ຄະນະຕິດຕາມ ແລະ ໃຫ້ຄໍາປຶກສາ ຂອງແນວລາວສ້າງຊາດ ແມ່ນ ກົງຈັກບຸກຄະລາກອນ ທີ່ໄດ້ຮັບການຮັບຮອງໃນກອງປະຊຸມໃຫຍ່ ຜູ້ແທນແນວລາວສ້າງຊາດແຕ່ລະຂັ້ນ.

ການ ຕິດຕາມ ແລະ ໃຫ້ຄໍາປຶກສາ ຂອງແນວລາວສ້າງຊາດ ແມ່ນ ການຊອກເຫັນ ແລະ ເຕົ້າໂຮມຄວາມຄິດຄວາມເຫັນ, ຄໍາສະເໜີ, ທາງສຽງ ແລະ ຄວາມມຸ່ງມາດປາຖະໜາ ຂອງປະຊາຊົນບັນດາເຜົ່າ, ຊັ້ນຄົນ, ຕໍ່ການເຄື່ອນໄຫວ ທີ່ຕັ້ງໜ້າ ແລະ ບໍ່ຕັ້ງໜ້າ ຂອງອົງການອໍານາດລັດ ໃນການປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່, ການຈັດຕັ້ງປະຕິບັດ ກົດໝາຍ, ແຜນພັດທະນາຕ່າງໆ ໃນຖານະທີ່ເປັນອົງການຕົວແທນປະຕິບັດໜ້າທີ່, ສິດອໍານາດຂອງຕົນ ຢ່າງສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ, ທັງຂໍ້ກໍານົດ 01/ຄລສພ.

ການໃຫ້ຄໍາປຶກສາ ຂອງແນວລາວສ້າງຊາດ ແມ່ນການສະເໜີແນະທາງອອກ ທີ່ສ້າງສັນ, ສາມັກຄີ ປອງດອງ ໃຫ້ຄະນະພັກ, ອໍານາດລັດ, ອົງການຈັດຕັ້ງການເມືອງ ແລະ ສັງຄົມ, ອົງການຈັດຕັ້ງສັງຄົມ ກ່ຽວຂ້ອງ.

### ມາດຕາ 16 ເປົ້າໝາຍ ການຕິດຕາມ ແລະ ໃຫ້ຄໍາປຶກສາ ຂອງແນວລາວສ້າງຊາດ

ເປົ້າໝາຍ ການຕິດຕາມ ແລະ ໃຫ້ຄໍາປຶກສາ ຂອງແນວລາວສ້າງຊາດ ໄດ້ກໍານົດໃນກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປຸງ ຢູ່ໃນ ພາກທີ V, ມາດຕາ 27 ແລະ ເພີ່ມຕື່ມ ມີ ດັ່ງນີ້:

1. ຄະນະພັກຂັ້ນຂອງຕົນ;
2. ສະພາຂັ້ນຂອງຕົນ;
3. ອົງການລັດບໍລິຫານ ແຕ່ລະຂັ້ນ;
4. ອົງການຕຸລາການ ແລະ ອົງການໄອຍະການປະຊາຊົນ ແຕ່ລະຂັ້ນ;
5. ສະມາຊິກລັດຖະບານ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ທະ ຫານ, ຕໍາຫຼວດ, ສະມາຊິກພັກ, ພະນັກງານ ແລະ ລັດຖະກອນ ລວມທັງ ພະນັກງານລັດວິສາຫະກິດ;
6. ອົງການຈັດຕັ້ງ ແລະ ບຸກຄົນ ທີ່ເປັນພາຄີ ຂອງແນວລາວສ້າງຊາດ;
7. ອົງການແນວລາວສ້າງຊາດ, ກໍາມະການແນວລາວສ້າງຊາດ ຜູ້ທີ່ປະຈໍາການ, ບໍ່ປະຈໍາການ, ຄະນະທີ່ປຶກສາ, ທີ່ປຶກສາ ແລະ ຄູ່ຮ່ວມງານ ຂອງແນວລາວສ້າງຊາດ.

### ມາດຕາ 17 ເນື້ອໃນ ການຕິດຕາມ ແລະ ໃຫ້ຄໍາປຶກສາ ຂອງແນວລາວສ້າງຊາດ

ເນື້ອໃນ ການຕິດຕາມ ແລະ ໃຫ້ຄໍາປຶກສາ ຂອງແນວລາວສ້າງຊາດ ແມ່ນໄດ້ກໍານົດໄວ້ ຢູ່ໃນ ພາກທີ V, ມາດຕາ 28 ຂອງກົດໝາຍ ວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ ແລະ ໝວດທີ່ II, ມາດຕາ 5 ຂອງຂໍ້ກໍານົດ ສະບັບເລກທີ 01/ຄລສພ.

**ມາດຕາ 18 ຫຼັກການ ຕິດຕາມ ແລະ ໃຫ້ຄຳປຶກສາ ຂອງແນວລາວສ້າງຊາດ**

ຫຼັກການ ຕິດຕາມ ແລະ ໃຫ້ຄຳປຶກສາ ຂອງແນວລາວສ້າງຊາດ ມີ ດັ່ງນີ້:

1. ຕິດຕາມ ແລະ ໃຫ້ຄຳປຶກສາ ຕໍ່ຄວາມຄິດຄວາມເຫັນ, ຄຳສະເໜີ, ການສ່ອງແສງ ເຖິງຄວາມມຸ່ງມາດປາຖະໜາ ຂອງປະຊາຊົນບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ບົນພື້ນຖານ ແນວທາງ, ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ມີປະຊາທິປະໄຕ;

2. ຜົນຂອງການຕິດຕາມ ແລະ ໃຫ້ຄຳປຶກສາ ຕ້ອງຮັບປະກັນ ຄວາມຊັດເຈນ, ຄົບຖ້ວນ, ພາວະວິໄສ, ໂປ່ງໃສ, ຍຸຕິທຳ, ເປີດເຜີຍ ຕາມລະບຽບການ ແລະ ທັນເວລາ;

3. ປະສານສົມທົບ ກັບ ຄະນະກວດກາພັກ, ອົງການກວດກາລັດ ຂັ້ນຂອງຕົນ, ອົງການພາຄີ ຂັ້ນລຸ່ມຖັດ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອຄວາມເປັນເອກະພາບ ໃນການເຂົ້າຮ່ວມ ວຽກງານຕິດຕາມ ແລະ ໃຫ້ຄຳປຶກສາ;

4. ບໍ່ສ້າງຄວາມຫຍຸ້ງຍາກ ການເຄື່ອນໄຫວວຽກງານ ໃຫ້ແກ່ ບຸກຄົນ ຫຼື ການຈັດຕັ້ງ ທີ່ພວມຖືກຕິດຕາມ ແລະ ໃຫ້ຄຳປຶກສາ.

**ມາດຕາ 19 ວິທີການ, ຂັ້ນຕອນ ການຕິດຕາມ ແລະ ໃຫ້ຄຳປຶກສາ ຂອງແນວລາວສ້າງຊາດ**

ວິທີການຕິດຕາມ ແລະ ໃຫ້ຄຳປຶກສາ ຂອງແນວລາວສ້າງຊາດ ມີ ດັ່ງນີ້:

1. ເກັບກຳ ແລະ ສັງລວມ ຄວາມຄິດ ຄວາມເຫັນ, ຫາງສຽງ, ຄຳຮ້ອງຟ້ອງ, ຄຳຮ້ອງທຸກ ຂອງປະຊາຊົນບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ແລ້ວລາຍງານ ຕໍ່ກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນກ່ຽວຂ້ອງ ເພື່ອພິຈາລະນາ ແກ້ໄຂ.

2. ຕິດຕາມ ແລະ ໃຫ້ຄຳປຶກສາ ພາກສ່ວນທີ່ກ່ຽວຂ້ອງ ໃນການແກ້ໄຂບັນຫາ ທີ່ປະຊາຊົນສະເໜີ;

3. ເກັບກຳຂໍ້ມູນ, ເອກະສານຕ່າງໆ ທີ່ກ່ຽວຂ້ອງ ກັບ ຄວາມຄິດຄວາມເຫັນ, ຄຳຮ້ອງຟ້ອງ, ຄຳຮ້ອງທຸກ ຂອງປະຊາຊົນບັນດາເຜົ່າ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ;

4. ປະສານສົມທົບ ລະຫວ່າງ ສາຍຕັ້ງ ແລະ ສາຍຂວາງ ຂອງແນວລາວສ້າງຊາດ ທີ່ກ່ຽວຂ້ອງ ກັບ ສະພາບ, ເຫດການຕ່າງໆ ທີ່ເກີດຂຶ້ນຢູ່ທ້ອງຖິ່ນ ເພື່ອຊອກຫາວິທີແກ້ໄຂ ໃຫ້ຖືກຄວາມຈິງ.

(ສຳລັບ ຂັ້ນຕອນ ການຕິດຕາມ ແລະ ໃຫ້ຄຳປຶກສາ ຂອງແນວລາວສ້າງຊາດ ແມ່ນໄດ້ກຳນົດໄວ້ຢູ່ໃນໝວດທີ II, ມາດຕາ 6 ຂໍ້ 2 ຂອງຂໍ້ກຳນົດ ສະບັບເລກທີ 01/ຄລສພ).

**ມາດຕາ 20 ລະບົບສາຍໃຍການຈັດຕັ້ງ ຂອງແນວລາວສ້າງຊາດ**

ລະບົບສາຍໃຍການຈັດຕັ້ງ ຂອງແນວລາວສ້າງຊາດ ປະກອບ ມີ ສີ່ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ (ເອີ້ນວ່າ ສູນກາງແນວລາວສ້າງຊາດ ຂຽນຫຍໍ້ວ່າ: ສນຊ);

2. ຂັ້ນແຂວງ, ນະຄອນຫຼວງ (ເອີ້ນວ່າ ແນວລາວສ້າງຊາດ ແຂວງ, ນະຄອນຫຼວງ ຂຽນຫຍໍ້ວ່າ: ນຊຂ, ນຊວ);

3. ຂັ້ນເມືອງ, ເທດສະບານ, ນະຄອນ (ເອີ້ນວ່າ ແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ ຂຽນຫຍໍ້ວ່າ: ນຊມ, ນຊທ, ນຊນ);

4. ຂັ້ນບ້ານ (ເອີ້ນວ່າ ແນວລາວສ້າງຊາດ ບ້ານ ຂຽນຫຍໍ້ວ່າ: ນຊບ).

**ມາດຕາ 21 ໂຄງປະກອບກົງຈັກການຈັດຕັ້ງ ຂອງແນວລາວສ້າງຊາດ**

ໂຄງປະກອບກົງຈັກການຈັດຕັ້ງ ຂອງແນວລາວສ້າງຊາດ ມີດັ່ງນີ້:

1.ຂັ້ນສູນກາງ ມີ ໂຄງປະກອບກົງຈັກການຈັດຕັ້ງຄື: ຫ້ອງການ, ກົມຈັດຕັ້ງ-ພະນັກງານ, ກົມກວດກາ, ກົມໂຄສະນາ, ກົມຊົນເຜົ່າ, ກົມສາສະໜາ, ກົມຊັ້ນຄົນ ແລະ ອົງການຈັດຕັ້ງສັງຄົມ ແລະ ສູນຝຶກອົບຮົມ;

2. ຂັ້ນແຂວງ, ນະຄອນຫຼວງ ມີ ໂຄງປະກອບການຈັດຕັ້ງ ຄື: ຂະແໜງບໍລິຫານ ແລະ ຈັດຕັ້ງ; ຂະແໜງກວດກາ; ຂະແໜງໂຄສະນາ; ຂະແໜງສາສະໜາ ແລະ ຂະແໜງຊົນເຜົ່າ, ຊັ້ນຄົນ ແລະ ການຈັດຕັ້ງສັງຄົມ;

3. ຂັ້ນເມືອງ, ເທດສະບານ, ນະຄອນ ມີ ໂຄງປະກອບການຈັດຕັ້ງ ຄື: ໜ່ວຍງານບໍລິຫານ, ຈັດຕັ້ງ ແລະ ໂຄສະນາ; ໜ່ວຍງານກວດກາ; ໜ່ວຍງານສາສະໜາ, ຊົນເຜົ່າ, ຊັ້ນຄົນ ແລະ ການຈັດຕັ້ງສັງຄົມ;

4. ຂັ້ນບ້ານ ແມ່ນການຈັດຕັ້ງໜຶ່ງ ຄືກັນກັບບັນດາອົງການຈັດຕັ້ງອື່ນໆ ຂອງບ້ານ.

ໃນກໍລະນີ ທີ່ມີຄວາມຈຳເປັນ ແນວລາວສ້າງຊາດ ສາມາດສະເໜີ ຕໍ່ການຈັດຕັ້ງທີ່ກ່ຽວຂ້ອງ ໃນການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ກົງຈັກການຈັດຕັ້ງຂັ້ນຂອງຕົນ.

**ມາດຕາ 22 ໂຄງປະກອບບຸກຄະລາກອນ ຂອງແນວລາວສ້າງຊາດ**

**ກ. ຂັ້ນສູນກາງ ມີ ໂຄງປະກອບບຸກຄະລາກອນ ດັ່ງນີ້:**

1. ກຳມະການສູນກາງແນວລາວສ້າງຊາດ;
2. ກຳມະການຄະນະປະຈຳຄະນະກຳມະການສູນກາງແນວລາວສ້າງຊາດ;
3. ປະທານຄະນະກຳມະການສູນກາງແນວລາວສ້າງຊາດ;
4. ຮອງປະທານຄະນະກຳມະການສູນກາງແນວລາວສ້າງຊາດປະຈຳການ ແລະ ບໍ່ປະຈຳການ;
5. ປະທານ, ຮອງປະທານ ຄະນະຕິດຕາມ ແລະ ໃຫ້ຄຳປຶກສາ ຂອງສູນກາງແນວລາວສ້າງຊາດ;
7. ຫົວໜ້າ, ຮອງຫົວໜ້າ ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ສູນກາງແນວລາວສ້າງຊາດ.

**ຂ. ຂັ້ນ ແຂວງ, ນະຄອນຫຼວງ ມີ ໂຄງປະກອບບຸກຄະລາກອນ ດັ່ງນີ້:**

1. ກາມະການແນວລາວສ້າງຊາດ;
2. ກຳມະການຄະນະປະຈຳຄະນະກຳມະການແນວລາວສ້າງຊາດ ແຂວງ, ນະຄອນຫຼວງ;
3. ປະທານຄະນະກຳມະການແນວລາວສ້າງຊາດ ແຂວງ, ນະຄອນຫຼວງ;
4. ຮອງປະທານຄະນະກຳມະການແນວລາວສ້າງຊາດປະຈຳການ ແລະ ບໍ່ປະຈຳການ ແຂວງ, ນະຄອນຫຼວງ;
5. ປະທານ, ຮອງປະທານ ຄະນະຕິດຕາມ ແລະ ໃຫ້ຄາປຶກສາ ຂອງແນວລາວສ້າງຊາດ ແຂວງ, ນະຄອນຫຼວງ;
6. ຫົວໜ້າ, ຮອງຫົວໜ້າ ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ແນວລາວສ້າງຊາດ ແຂວງ, ນະຄອນຫຼວງ.

**ຄ. ແນວລາວສ້າງຊາດ ຂັ້ນ ເມືອງ, ເທດສະບານ, ນະຄອນ ມີ ໂຄງປະກອບບຸກຄະລາກອນດັ່ງນີ້:**

1. ກາມະການແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ;

2. ກໍາມະການຄະນະປະຈໍາຄະນະກໍາມະການແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ;

3. ປະທານຄະນະກໍາມະການແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ;

4. ຮອງປະທານຄະນະກໍາມະການແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ;

5. ປະທານ, ຮອງປະທານ ຄະນະຕິດຕາມ ແລະ ໃຫ້ຄໍາປຶກສາ ຂອງແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ;

6. ຫົວໜ້າ, ຮອງຫົວໜ້າ ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ.

**ງ. ແນວລາວສ້າງຊາດບ້ານ ມີ ໂຄງປະກອບບຸກຄະລາກອນດັ່ງນີ້:**

1. ກໍາມະການແນວລາວສ້າງຊາດບ້ານ;

2. ປະທານຄະນະກໍາມະການແນວລາວສ້າງຊາດບ້ານ;

3. ຮອງປະທານຄະນະກໍາມະການແນວລາວສ້າງຊາດບ້ານ;

4. ປະທານ, ຮອງປະທານ ຄະນະຕິດຕາມ ແລະ ໃຫ້ຄໍາປຶກສາ ຂອງແນວລາວສ້າງຊາດບ້ານ;

5. ຫົວໜ້າ, ຮອງຫົວໜ້າ ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ.

ກໍາມະການແນວລາວສ້າງຊາດ ຂັ້ນທ້ອງຖິ່ນ ແມ່ນໃຫ້ອີງໃສ່ສະພາບຈຸດພິເສດຕົວຈິງ ຂອງແຂວງ, ນະຄອນ; ເມືອງ, ເທດສະບານ, ນະຄອນ ແລະ ບ້ານ.

ສໍາລັບ ຈໍານວນພະນັກງານ ແລະ ລັດຖະກອນ ແນວລາວສ້າງຊາດ ຂັ້ນ ຂະແໜງການ, ວິຊາການ ຂອງແນວລາວສ້າງຊາດ ແຂວງ, ນະຄອນຫຼວງ; ເມືອງ, ເທດສະບານ, ນະຄອນ ແມ່ນໃຫ້ອີງໃສ່ຂໍ້ຕົກລົງ ທີ່ສູນກາງແນວລາວສ້າງຊາດ ໄດ້ລະບຸໄວ້ ບົນພື້ນຖານການກໍານົດຕໍາແໜ່ງງານຕົວຈິງ.

## ໝວດທີ IV
## ພາຄີ, ຄະນະທີ່ປຶກສາ, ທີ່ປຶກສາ ແລະ ຄູ່ຮ່ວມງານ ຂອງແນວລາວສ້າງຊາດ

### ມາດຕາ 23 ພາຄີ ຂອງແນວລາວສ້າງຊາດ

ພາຄີ ຂອງແນວລາວສ້າງຊາດ ແມ່ນ ການຈັດຕັ້ງ ແລະ ບຸກຄົນ ທີ່ເປັນຕົວແທນໃຫ້ແກ່ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ຊຶ່ງເຫັນດີເຄື່ອນໄຫວຕາມກົດລະບຽບຂອງແນວລາວສ້າງຊາດ. ແຕ່ການຈັດຕັ້ງທີ່ເປັນພາຄີນັ້ນ ຍັງຮັກສາຄວາມເປັນເອກະລາດ ໃນການເຄື່ອນໄຫວວຽກງານ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ເງື່ອນໄຂ ຂອງການເຂົ້າເປັນພາຄີ ແນວລາວສ້າງຊາດ ແມ່ນ ເງື່ອນໄຂດຽວກັນກັບ ກໍາມະການແນວລາວສ້າງຊາດ ຕາມທີ່ໄດ້ກໍານົດໄວ້ໃນພາກທີ II, ໝວດທີ 2, ມາດຕາ 13 ຂອງກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ ແລະ ຕ້ອງໄດ້ຮັບການເຫັນດີເຫັນພ້ອມ ຈາກຄະນະກໍາມະການແນວລາວສ້າງຊາດ ທີ່ກ່ຽວຂ້ອງ.

ສຳລັບ ສິດ ແລະ ໜ້າທີ່ ຂອງພາຄີ ຂອງແນວລາວສ້າງຊາດ ແມ່ນໄດ້ກຳນົດໄວ້ ຢູ່ໃນພາກທີ III, ມາດຕາ 23 ຂອງກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ.

**ມາດຕາ 24 ພາຄີ ທີ່ເປັນການຈັດຕັ້ງ ຂອງແນວລາວສ້າງຊາດ**

ການຈັດຕັ້ງ ທີ່ເປັນພາຄີ ຂອງແນວລາວສ້າງຊາດ ມີ ດັ່ງນີ້:

1. ອົງການຈັດຕັ້ງການເມືອງ (ພັກປະຊາຊົນປະຕິວັດລາວ ເປັນແກ່ນນຳ, ເປັນຄັນທຸງ ຊີ້ນຳນຳພາ ທັງເປັນພາຄີ ຂອງແນວລາວສ້າງຊາດ);

2. ອົງການຈັດຕັ້ງການເມືອງ-ສັງຄົມ (ສະຫະພັນກຳມະບານລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນແມ່ຍິງລາວ ແລະ ສະຫະພັນນັກຮົບເກົ່າລາວ);

3. ອົງການຈັດຕັ້ງສັງຄົມ (ສະຫະພັນ, ສະມາຄົມ, ມູນນິທິ, ສະໂມສອນ ແລະ ອື່ນໆ ຢູ່ ສປປ ລາວ ທີ່ສ້າງຕັ້ງຂຶ້ນໂດຍຖືກຕ້ອງຕາມກົດໝາຍ).

**ມາດຕາ 25 ພາຄີ ທີ່ເປັນບຸກຄົນ ຂອງແນວລາວສ້າງຊາດ**

ພາຄີ ທີ່ເປັນບຸກຄົນ ຂອງແນວລາວສ້າງຊາດ ແມ່ນ ບຸກຄົນທີ່ເປັນຕົວແທນ ໃຫ້ ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ ແລະ ໄວ ລວມທັງ ຄົນເຊື້ອຊາດລາວ ທີ່ດາລົງຊີວິດຢູ່ຕ່າງປະເທດ.

**ມາດຕາ 26 ຄະນະທີ່ປຶກສາ, ທີ່ປຶກສາ ແລະ ຄູ່ຮ່ວມງານ ຂອງແນວລາວສ້າງຊາດ**

ຄະນະທີ່ປຶກສາ, ທີ່ປຶກສາ ແລະ ຄູ່ຮ່ວມງານ ຂອງແນວລາວສ້າງຊາດ ມີ ດັ່ງນີ້:

1. ຄະນະທີ່ປຶກສາ ຂອງແນວລາວສ້າງຊາດ ແມ່ນ ການຈັດຕັ້ງ, ໜ່ວຍງານ, ຂອງກຳມະການແນວລາວສ້າງຊາດ ບໍ່ປະຈຳການ ມີ ບົດບາດ ແລະ ໜ້າທີ່ ໃຫ້ຄຳປຶກສາ ກ່ຽວກັບວຽກງານໃດໜຶ່ງ ຂອງຄະນະກຳມະການແນວລາວສ້າງຊາດ ຂັ້ນໃດໜຶ່ງ ຊຶ່ງ ມີໄລຍະປະຕິບັດໜ້າທີ່ ເຕັມສະໄໝ ຫຼື ເຄິ່ງສະໄໝ ກອງປະຊຸມໃຫຍ່ ຂັ້ນຂອງຕົນ.

2. ທີ່ປຶກສາ ຂອງແນວລາວສ້າງຊາດ ແມ່ນ ຄົນລາວ ຫຼື ຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ທີ່ມີຄວາມປະສົງ ຢາກສະໜັບສະໜູນ ວຽກງານແນວ. ທີ່ປຶກສາ ແມ່ນ ມີມາດຖານເງື່ອນໄຂດຽວກັນກັບ ກຳມະການແນວລາວສ້າງຊາດ ແລະ ຖືກແຕ່ງຕັ້ງ ຈາກຄະນະປະຈຳແນວລາວສ້າງຊາດ.

3. ຄູ່ຮ່ວມງານ ຂອງແນວລາວສ້າງຊາດ ແມ່ນ ບຸກຄົນ ຫຼື ນິຕິບຸກຄົນ ພາຍໃນ ຫຼື ຊາວຕ່າງປະເທດ ທີ່ບໍ່ແມ່ນ ກຳມະການແນວລາວສ້າງຊາດ ທີ່ມີຄວາມສົນໃຈ ແລະ ສະໝັກໃຈ ຢາກປະກອບສ່ວນທຶນຮອນ, ສະຕິປັນຍາ, ວັດຖຸສິ່ງຂອງ ຕົນເອງ ຫຼື (ລວມໝູ່) ເຂົ້າໃນວຽກງານ ສະເພາະກິດ ຫຼື ກິດຈະການໃດໜຶ່ງ ໂດຍບໍ່ຮຽກຮ້ອງຄ່າຕອບແທນ. ຄູ່ຮ່ວມງານ ຂອງແນວລາວສ້າງຊາດ ແມ່ນ ຖືກຮັບຮອງ ຈາກຄະນະປະຈຳແນວລາວສ້າງຊາດ ແລະ ເມື່ອສິ້ນສຸດ ກິດຈະກຳດັ່ງກ່າວ ກໍ່ສາມາດພົ້ນຈາກສະຖານະພາບ ເປັນຄູ່ຮ່ວມງານ.

ຄະນະກຳມະການແນວລາວສ້າງຊາດ ແຕ່ລະຂັ້ນ ມີສິດ ນຳສະເໜີ ສ້າງຕັ້ງຄະນະທີ່ປຶກສາ, ທີ່ປຶກສາ ແລະ ຄູ່ຮ່ວມງານ ຂັ້ນຂອງຕົນ ຕາມຄວາມເໝາະສົມ, ແຕ່ຕ້ອງຂໍຄວາມເຫັນ ນຳຄະນະພັກຂັ້ນຂອງຕົນ ຕາມລະບຽບການ.

ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ຂອງແນວລາວສ້າງຊາດ ມີ ດັ່ງນີ້:

1. ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ວຽກງານຊົນເຜົ່າ;
2. ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ວຽກງານສາສະໜາ;
3. ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ວຽກງານຊັ້ນຄົນ ແລະ ການຈັດຕັ້ງສັງຄົມ;
4. ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ວຽກງານເສດຖະກິດ ແລະ ກອງທຶນສາມັກຄີພັດທະນາ;
5. ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ວຽກງານຍຸຕິທຳ ແລະ ກົດໝາຍ;
6. ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ວຽກງານຂົນຂວາຍປະຊາຊົນ;
7. ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ວຽກງານພົວພັນຄົນເຊື້ອຊາດລາວ ຢູ່ຕ່າງປະເທດ;
8. ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ວຽກງານຂົນຂວາຍສ້າງຕັ້ງສະມາຄົມຊາວກະສິກອນ.

**ມາດຕາ 27 ສິດ ແລະ ໜ້າທີ່ ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ຂອງແນວລາວສ້າງຊາດ**

ຄະນະທີ່ປຶກສາ ແລະ ຄູ່ຮ່ວມງານ ຂອງແນວລາວສ້າງຊາດມີ ສິດ ແລະໜ້າທີ່ ດັ່ງນີ້:

1. ສຶກສາອົບຮົມ, ປຸກລະດົມ, ເຕົ້າໂຮມຄວາມສາມັກຄີ ແລະ ເສີມຂະຫຍາຍສິດເປັນເຈົ້າຂອງ ປະຊາຊົນບັນດາເຜົ່າ ເຂົ້າຮ່ວມການປົກປັກຮັກສາ ແລະ ພັດທະນາປະເທດຊາດ;

2. ສ່ອງແສງ, ນຳເອົາຄວາມຄິດຄວາມເຫັນ ແລະ ຄວາມມຸ່ງມາດປາຖະໜາ, ຄຳສະເໜີ ຂອງ ປະຊາຊົນບັນດາເຜົ່າ, ຊັ້ນຄົນຕ່າງໆ ໃນຂອບເຂດຂອງຕົນ ສະເໜີຕໍ່ ແນວລາວສ້າງຊາດຂັ້ນຂອງຕົນ;

3. ໃຫ້ຄຳປຶກສາ, ສະເໜີແນະນຳ ທາງອອກທີ່ດີ ຕໍ່ບັນຫາທີ່ກ່ຽວຂ້ອງ;

4. ປະຕິບັດໜ້າທີ່ ເປັນຫຼັກແຫຼ່ງແຫ່ງຄວາມສາມັກຄີປອງດອງ, ເປັນຜູ້ສ້າງ ຄຸນນະທຳ ແລະ ຄວາມດີ ໃຫ້ສັງຄົມ ກ່ອນອື່ນໝົດ ໃນພື້ນທີ່ຕົນເອງຢູ່;

5. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຄະນະປະຈຳແນວລາວສ້າງຊາດຂັ້ນຂອງຕົນ.

## ໝວດທີ V
## ການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງທົ່ວປວງຊົນ

**ມາດຕາ 28 ການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງທົ່ວປວງຊົນ**

ຄະນະກຳມະການແນວລາວສ້າງຊາດທຸກຂັ້ນ ມີໜ້າທີ່ ຊຸກຍູ້, ປຸກລະດົມ, ຂົນຂວາຍ ປະຊາຊົນ, ການຈັດຕັ້ງ, ບຸກຄົນ, ຜູ້ຊົງຄຸນວຸດທິ ທີ່ມີບົດບາດ ແລະ ໄດ້ຮັບຄວາມເຊື່ອຖື ໃຫ້ມີການເຄື່ອນໄຫວຫຼາຍຮູບຫຼາຍສີ ໃນການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງທົ່ວປວງຊົນ ໂດຍບໍ່ຈຳແນກ ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ລວມທັງ ຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ເພື່ອເປັນກຳລັງແຮງເຂົ້າຮ່ວມໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ສຳລັບວິທີ ການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງທົ່ວປວງຊົນ ແມ່ນໄດ້ກຳນົດໄວ້ ຢູ່ ໃນພາກທີ IV, ມາດຕາ 25 ຂອງກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ.

**ມາດຕາ 29 ຫຼັກການຂົນຂວາຍ, ຊວນເຊື່ອ ແລະ ເຕົ້າໂຮມຄວາມສາມັກຄີປອງດອງທົ່ວປວງຊົນ**

ຫຼັກການຂົນຂວາຍ, ຊວນເຊື່ອ ແລະ ເຕົ້າໂຮມຄວາມສາມັກຄີປອງດອງທົ່ວປວງຊົນ ມີຫຼັກການ ດັ່ງນີ້:

1. ນັບຖືປະຊາຊົນ, ຕັ້ງໜ້າເສີມຂະຫຍາຍ ສິດ ເປັນເຈົ້າ, ປະຊາທິປະໄຕ ຂອງປະຊາຊົນ ໂດຍບໍ່ຈຳແນກ ຄວາມເຊື່ອຖື, ຊັ້ນຄົນ, ຊົນເຜົ່າ, ເພດ, ໄວ;

2. ໃກ້ຊິດຕິດແທດກັບປະຊາຊົນ, ມີນ້ຳໃຈເອື້ອເຟື້ອເພື່ອແຜ່ ແລະ ເຂົ້າໃຈປະຊາຊົນ ເພື່ອເກັບກຳຄຳຄິດຄຳເຫັນ, ສ່ອງແສງມານະຈິດ ແລະ ຄວາມມຸ່ງມາດປາຖະໜາ ຂອງປະຊາຊົນບັນດາເຜົ່າ;

3. ມີຄວາມຮັບຜິດຊອບ ຕໍ່ປະຊາຊົນ, ຊຶ່ງສະແດງອອກ ໂດຍຜ່ານ ການຕິດຕາມ ແລະ ໃຫ້ຄຳປຶກສາ ເພື່ອນຳເອົາແນວທາງ, ນະໂຍບາຍ ຂອງພັກ ແລະ ກົດໝາຍ ຂອງລັດ ເຂົ້າເຖິງປະຊາຊົນ.

**ມາດຕາ 30 ແນວລາວສ້າງຊາດ ຕໍ່ວຽກງານຊົນເຜົ່າ**

ແນວລາວສ້າງຊາດ ຕໍ່ວຽກງານເຜົ່າ ມີ ດັ່ງນີ້:

1. ເຕົ້າໂຮມຄວາມສາມັກຄີ ປະຊາຊົນບັນດາເຜົ່າ ທັງຢູ່ພາຍໃນ ແລະ ຕ່າງປະເທດ;

2. ເຜີຍແຜ່ ແນວທາງ, ນະໂຍບາຍ ຂອງພັກ, ກົດໝາຍ, ລະບຽບການຂອງລັດ, ຂໍ້ມູນຂ່າວສານ ແລະ ຝຶກອົບຮົມ ໃຫ້ຜູ້ຊົງຄຸນວຸດທິຂອງຊົນເຜົ່າ ເພື່ອໃຫ້ເຂົາເຈົ້າເປັນຫຼັກແຫຼ່ງ ໃນການເຕົ້າໂຮມຄວາມສາມັກຄີ ແລະ ສຶກສາອົບຮົມ, ປຸກລະດົມລູກຫຼານ ເປັນເຈົ້າການ ໃນການທຳມາຫາກິນ ເພື່ອແກ້ໄຂຄວາມທຸກຍາກໃນຄອບ ຄົວ ແລະ ເຂົ້າຮ່ວມການສ້າງສາພັດທະນາປະເທດຊາດ;

3. ໂຄສະນາ, ສຶກສາອົບຮົມ, ປຸກລະດົມ, ຂົນຂວາຍ, ເສີມຂະຫຍາຍສິດເປັນເຈົ້າ ຂອງປະຊາຊົນລາວບັນດາເຜົ່າ ໃນການປະຕິບັດແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ ແລະ ສັງຄົມ ໃນແຕ່ລະໄລຍະ;

4. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນບັນດາເຜົ່າ, ເຂົ້າຮ່ວມແກ້ໄຂຂໍ້ຂັດແຍ່ງ ຢູ່ຂັ້ນບ້ານ ເພື່ອສ້າງຄວາມສາມັກຄີປອງດອງ;

5. ເສີມຂະຫຍາຍສິດ ແລະ ປະຊາຊທິປະໄຕ ຂອງປະຊາຊົນບັນດາເຜົ່າ;

6. ຈັດກອງປະຊຸມພົບປະຜູ້ຊົງຄຸນວຸດທິ ແລະ ງານມະໂຫລານວັດທະນະທຳຊົນເຜົ່າ ຢູ່ ຂັ້ນສູນກາງ 5 ປີເທື່ອໜຶ່ງ, ຂັ້ນແຂວງ ແລະ ເມືອງ 3 ປີເທື່ອໜຶ່ງ ຫຼື ຕາມເງື່ອນໄຂສະພາບຕົວຈິງ;

7. ປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບ ການເຄື່ອນໄຫວວຽກງານຊົນເຜົ່າ;

8. ປະຕິບັດຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 31 ແນວລາວສ້າງຊາດ ຕໍ່ວຽກງານສາສະໜາ**

ແນວລາວສ້າງຊາດ ຕໍ່ວຽກງານສາສະໜາ ມີ ດັ່ງນີ້:

1. ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມ, ປຸກລະດົມ, ຂົນຂວາຍ ການຈັດຕັ້ງສາສະໜາ, ນັກບວດ, ນັກສອນສາສະໜາ, ສາສະນິກະຊົນ ໃນການປະຕິບັດ ແນວທາງ, ນະໂຍບາຍ ຂອງພັກ, ກົດໝາຍ, ລະບຽບການ, ແຜນພັດທະນາເສດຖະກິດ ແລະ ສັງຄົມ, ເຕົ້າໂຮມສາສະນິກະຊົນ ຂອງສາສະໜາຕ່າງໆ ເພື່ອສ້າງກ້ອນກຳລັງສາມັກຄີທົ່ວປວງຊົນ ໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ;

2. ເປັນຕົວແທນສ່ອງແສງຄວາມຄິດເຫັນ, ຄວາມມຸ່ງມາດປາຖະໜາ, ຂໍ້ສະເໜີຂອງສາສະໜາ ແລະ ສາສະນິກະຊົນ ເພື່ອສະເໜີ ຕໍ່ອົງການຈັດຕັ້ງ ທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ແກ້ໄຂ;

3. ເຂົ້າຮ່ວມ ໃນການຄົ້ນຄວ້າ ສ້າງ ນະໂຍບາຍ, ນິຕິກຳຕ່າງໆ ກ່ຽວກັບ ວຽກງານສາສະໜາ, ຕິດຕາມ ແລະ ໃຫ້ຄຳປຶກສາ ການຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ ຂອງ ອົງການບໍລິຫານລັດ, ການຈັດຕັ້ງສາສະໜາ ແລະ ສາສະນິກະຊົນ ຕໍ່ກັບວຽກງານສາສະໜາ, ປະສານສົມທົບກັບ ອົງການປົກຄອງຂັ້ນສູນກາງ, ທ້ອງຖິ່ນ ໃນການປຶກສາຫາລື, ໄກ່ເກ່ຍ ແລະ ແກ້ໄຂ ບັນຫາຂໍ້ຂັດແຍ່ງ ກ່ຽວກັບວຽກງານສາສະໜາ;

4. ເຂົ້າຮ່ວມ ແລະ ປະຕິບັດກິດຈະກາ, ພິທີກາ, ງານບຸນສົມກົນທານຕ່າງໆ ທາງສາສະໜາ, ເສີມຂະຫຍາຍມູນເຊື້ອຮັກຊາດ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ຂອງປະຊາຊົນບັນດາເຜົ່າ; ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງບັນດາການຈັດຕັ້ງສາສະໜາ ແລະ ສາສະນິກະຊົນ; ຊຸກຍູ້ ແລະ ເສີມຂະຫຍາຍການພົວພັນຮ່ວມມືສາກົນ ຂອງການຈັດຕັ້ງສາສະໜາ;

5. ປະຕິບັດຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ການົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 32 ແນວລາວສ້າງຊາດ ຕໍ່ວຽກງານຊົນຄົນ ແລະ ອົງການຈັດຕັ້ງສັງຄົມ

ແນວລາວສ້າງຊາດ ຕໍ່ວຽກງານຊົນຄົນ ແລະ ອົງການຈັດຕັ້ງສັງຄົມ ມີ ດັ່ງນີ້:

1. ເຕົ້າໂຮມຄວາມສາມັກຄີ ບັນດາຊັ້ນຄົນ ແລະ ອົງການຈັດຕັ້ງ ທີ່ເຄື່ອນໄຫວ ຢູ່ ພາຍໃນປະເທດ ໃຫ້ມີຄວາມສາມັກຄີແໜ້ນແຟ້ນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ;

2. ໂຄສະນາ, ສຶກສາອົບຮົມ, ປຸກລະດົມ, ຂົນຂວາຍ, ເສີມຂະຫຍາຍ ຫົວຄິດປະດິດສ້າງ ຂອງ ບັນດາຊັ້ນຄົນ, ສະມາຊິກອົງການຈັດຕັ້ງສັງຄົມ ໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ ແລະ ສັງຄົມ ໃນແຕ່ລະໄລຍະ;

3. ຕິດຕາມ ແລະ ໃຫ້ຄຳປຶກສາ, ເກັບກຳ ຄຳຄິດຄຳເຫັນ, ຄຳສະເໜີ, ຄວາມມຸ່ງມາດປາຖະໜາ ຂອງຊັ້ນຄົນ, ອົງການຈັດຕັ້ງສັງຄົມ ນຳສະເໜີ ຕໍ່ອົງການຈັດຕັ້ງ ທີ່ກ່ຽວຂ້ອງ ຄົ້ນຄວ້າ, ພິຈາລະນາ, ແກ້ໄຂ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຊັ້ນຄົນ, ອົງການຈັດຕັ້ງສັງຄົມ;

4. ເຂົ້າຮ່ວມ ໃນການສ້າງ ແລະ ປັບປຸງ ນິຕິກຳຕ່າງໆ ທັງປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຊັ້ນຄົນ ແລະ ອົງການຈັດຕັ້ງສັງຄົມ;

5. ປະຕິບັດຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 33 ແນວລາວສ້າງຊາດ ຕໍ່ວຽກງານພົວພັນຄົນເຊື້ອຊາດລາວທີ່ດຳລົງຊີວິດ ຢູ່ຕ່າງປະເທດ

ແນວລາວສ້າງຊາດ ຕໍ່ວຽກງານພົວພັນຄົນເຊື້ອຊາດລາວທີ່ດຳລົງຊີວິດ ຢູ່ຕ່າງປະເທດ ມີ ດັ່ງນີ້:

1. ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມ, ປຸກລະດົມ, ຂົນຂວາຍ ຄົນເຊື້ອຊາດລາວທີ່ດຳລົງຊີວິດ ຢູ່ຕ່າງ ປະເທດ ຜູ້ທີ່ມີຄວາມຕື່ນຕົວສະໝັກໃຈ, ຢາກປະກອບສ່ວນສ້າງສາພັດທະນາປະເທດຊາດ;

2. ໂຄສະນາ, ເຜີຍແຜ່ ແນວທາງ, ນະໂຍບາຍຂອງພັກ ເວົ້າລວມ, ເວົ້າສະເພາະ ນະໂຍບາຍ ຕໍ່ຄົນເຊື້ອຊາດລາວທີ່ດຳລົງຊີວິດ ຢູ່ຕ່າງປະເທດ ຢ່າງກວ້າງຂວາງ;

3. ເກັບກຳ ຄຳຄິດຄຳເຫັນ, ຄຳສະເໜີ ຂອງຄົນເຊື້ອຊາດລາວທີ່ດຳລົງຊີວິດ ຢູ່ ຕ່າງປະເທດ ຕໍ່ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ ແລະ ສັງຄົມ ໃນແຕ່ລະໄລຍະ;

4. ປົກປ້ອງສິດ, ຜົນປະໂຫຍດອັນຊອບທໍາ ຂອງຄົນເຊື້ອຊາດລາວທີ່ດໍາລົງຊີວິດ ຢູ່ຕ່າງປະເທດ ທີ່ເຄື່ອນໄຫວດໍາເນີນທຸລະກິດ ຢູ່ ພາຍໃນປະເທດ ບົນພື້ນຖານແນວທາງ, ນະໂຍບາຍ ຂອງພັກ ແລະ ກົດໝາຍ ຂອງ ລັດ;

5. ປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບ ການເຄື່ອນໄຫວວຽກງານພົວພັນ ຄົນເຊື້ອຊາດລາວທີ່ດໍາລົງຊີວິດ ຢູ່ ຕ່າງປະເທດ.

6. ປະຕິບັດຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ VI
## ການຄຸ້ມຄອງ ແລະ ການກວດກາວຽກງານ ແນວລາວສ້າງຊາດ

### ມາດຕາ 34 ອົງການຄຸ້ມຄອງວຽກງານ ຂອງແນວລາວສ້າງຊາດ

ອົງການຄຸ້ມຄອງວຽກງານ ແນວລາວສ້າງຊາດ ປະກອບດ້ວຍ:

1. ສູນກາງແນວລາວສ້າງຊາດ;
2. ແນວລາວສ້າງຊາດ ແຂວງ, ນະຄອນຫຼວງ;
3. ແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ;
4. ແນວລາວສ້າງຊາດບ້ານ.

### ມາດຕາ 35 ສິດ ແລະ ໜ້າທີ່ ອົງການຄຸ້ມຄອງວຽກງານ ຂອງແນວລາວສ້າງຊາດ

ອົງການຄຸ້ມຄອງວຽກງານ ຂອງແນວລາວສ້າງຊາດແຕ່ລະຂັ້ນ ມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ ກໍານົດໄວ້ ຢູ່ໃນພາກທີ IX, ໝວດທີ 1, ມາດຕາ 42, 43, 44, 45 ຂອງກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ.

### ມາດຕາ 36 ອົງການກວດກາວຽກງານ ຂອງແນວລາວສ້າງຊາດ

ອົງການກວດກາວຽກງານ ຂອງແນວລາວສ້າງຊາດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັນ ກັບອົງການຄຸ້ມຄອງວຽກງານ ຂອງແນວລາວ ສ້າງຊາດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 34 ຂອງກົດລະບຽບສະບັບນີ້ ແລະ ຕາມທີ່ໄດ້ກໍານົດໄວ້ໃນພາກທີ IX, ໝວດທີ 1, ມາດຕາ 41 ຂອງກົດໝາຍ ວ່າດ້ວຍແນວລາວສ້າງຊາດ. ຄະນະຕິດຕາມ ແລະ ໃຫ້ຄໍາປຶກສາ ຢູ່ ຂັ້ນສູນ ກາງ ແມ່ນ ກົມກວດກາ; ຂັ້ນແຂວງ, ນະຄອນຫຼວງ ແມ່ນ ຂະແໜງກວດກາ; ຂັ້ນເມືອງ, ເທດສະບານ, ນະຄອນ ແມ່ນ ໜ່ວຍງານກວດກາ ແລະ ຂັ້ນບ້ານ ແມ່ນ ຜູ້ຮັບຜິດຊອບວຽກງານກວດກາ;

2. ອົງການກວດກາຈາກພາຍນອກ ຕໍ່ວຽກງານແນວໂຮມ ມີ ຄະນະພັກ, ຄະນະກວດກາພັກ, ອົງການກວດກາແຫ່ງລັດ, ສະພາແຫ່ງຊາດ, ອົງການກວດສອບແຫ່ງລັດ, ສະພາປະຊາຊົນຂັ້ນແຂວງ ແລະ ປະຊາຊົນ.

### ມາດຕາ 37 ເນື້ອໃນ ແລະ ຮູບການ ກວດກາວຽກງານ ຂອງແນວລາວສ້າງຊາດ

ເນື້ອໃນ ແລະ ຮູບການ ກວດກາວຽກງານ ຂອງແນວລາວສ້າງຊາດ ແມ່ນ ໄດ້ກໍານົດໄວ້ ຢູ່ໃນ ພາກທີ IX, ໝວດທີ 2, ມາດຕາ 47, 48 ຂອງກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ.

ສູນກາງແນວລາວສ້າງຊາດ, ແນວລາວສ້າງຊາດ ຂັ້ນແຂວງ ຕາງໜ້າໃຫ້ ອົງການຈັດຕັ້ງມະຫາຊົນຂັ້ນຂອງຕົນ ປະກອບຄໍາເຫັນ ຕໍ່ກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ປີລະ 01 ຄັ້ງ. ເພື່ອສະເໜີ ຄໍາຄິດຄໍາເຫັນ, ສ່ອງແສງມານະຈິດ, ຄວາມມຸ່ງມາດປາຖະໜາ ຕາມຖານສຽງຂອງປະຊາຊົນບັນດາເຜົ່າ, ສະເໜີຕໍ່ສະພາແຫ່ງຊາດ, ຜ່ານສະພາແຫ່ງຊາດ ໄປຍັງພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂ.

## ໝວດທີ VII
## ກອງປະຊຸມ ຂອງແນວລາວສ້າງຊາດ

### ມາດຕາ 38 ກອງປະຊຸມໃຫຍ່ ຂອງແນວລາວສ້າງຊາດ

ກອງປະຊຸມໃຫຍ່ ຜູ້ແທນແນວລາວສ້າງຊາດ ທົ່ວປະເທດ, ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ ແມ່ນກອງປະຊຸມສູງສຸດ ຂອງແນວລາວສ້າງຊາດແຕ່ລະຂັ້ນ ຊຶ່ງ ຫ້າປີໃດດໍາເນີນເທື່ອໜຶ່ງ. ກ່ອນຈະເປີດກອງປະຊຸມໃຫຍ່ ປະທານຄະນະກໍາມະການແນວລາວສ້າງຊາດ ຕ້ອງໄດ້ແຈ້ງໄປຍັງຄະນະກໍາມະການແນວລາວສ້າງຊາດຂັ້ນຂອງຕົນ ແລະ ຄະນະກໍາມະການແນວລາວສ້າງຊາດຂັ້ນລຸ່ມ ກ່ອນໜຶ່ງປີ.

ຈໍານວນຜູ້ແທນ ແລະ ແຂກຖືກເຊີນ ເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນແນວລາວສ້າງຊາດທົ່ວປະເທດ ແມ່ນກອງປະຊຸມຄະນະກໍາມະການສູນກາງແນວລາວສ້າງຊາດປຶກສາຫາລື ແລະ ຕົກລົງ.

ຂັ້ນ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ ແມ່ນກອງປະຊຸມແນວລາວສ້າງຊາດຂັ້ນນັ້ນປຶກສາຫາລື ແລະ ຕົກລົງ ບົນພື້ນຖານການຊີ້ນໍາ ຂອງຄະນະປະຈໍາພັກຂັ້ນນັ້ນ ແລະ ການແນະນໍາຂອງຂັ້ນເທິງຖັດ.

ສໍາລັບ ສິດ ແລະ ໜ້າທີ່ ຂອງກອງປະຊຸມໃຫຍ່ ແມ່ນ ໄດ້ກໍານົດໄວ້ ຢູ່ໃນພາກທີ VI, ມາດຕາ 31 ຂອງກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ.

### ມາດຕາ 39 ກອງປະຊຸມສາມັນ

ກອງປະຊຸມສາມັນ ແມ່ນ ກອງປະຊຸມຄົບຄະນະກໍາມະການແນວລາວສ້າງຊາດ ປະຈໍາປີ ເປີດຂຶ້ນປີລະ 1 ຄັ້ງ ໂດຍແມ່ນປະທານຄະນະກໍາມະການແນວລາວສ້າງຊາດຂັ້ນນັ້ນ ເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ.

ກອງປະຊຸມສາມັນ ຕ້ອງມີກໍາມະການແນວລາວສ້າງຊາດ ເຂົ້າຮ່ວມຢ່າງໜ້ອຍສອງສ່ວນສາມ ຂອງຈໍານວນກໍາມະການທັງໝົດ; ປະທານຄະນະກໍາມະການແນວລາວສ້າງຊາດ ຕ້ອງແຈ້ງໄປຍັງກໍາມະການແນວລາວສ້າງຊາດຂັ້ນຂອງຕົນ ແລະ ຄະນະກໍາມະການແນວລາວສ້າງຊາດຂັ້ນລຸ່ມກ່ອນ ສາມເດືອນ.

ສໍາລັບ ສິດ ແລະ ໜ້າທີ່ ກອງປະຊຸມສາມັນ ແມ່ນ ໄດ້ກໍານົດໄວ້ ຢູ່ໃນພາກທີ VI, ມາດຕາ 33 ຂອງກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ.

### ມາດຕາ 40 ກອງປະຊຸມວິສາມັນ

ກອງປະຊຸມວິສາມັນ ຈະເປີດຂຶ້ນເວລາໃດກໍໄດ້ ໃນກໍລະນີຈໍາເປັນ ແລະ ຮີບດ່ວນເພື່ອພິຈາລະນາບັນຫາສໍາຄັນ ຕາມການສະເໜີ ຂອງປະທານຄະນະກໍາມະການແນວລາວສ້າງຊາດ.

ກອງປະຊຸມວິສາມັນ ຈະເປີດຂຶ້ນໄດ້ ກໍຕໍ່ເມື່ອມີກຳມະການແນວລາວສ້າງຊາດ ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນກຳມະການທັງໝົດ.

**ມາດຕາ 41 ກອງປະຊຸມຄະນະປະຈຳ**

ກອງປະຊຸມຄະນະປະຈຳ ຄະນະກຳມະການແນວລາວສ້າງຊາດແຕ່ລະຂັ້ນ ເປີດຂຶ້ນເດືອນລະເທື່ອ ເພື່ອພິຈາລະນາ ບັນຫາສຳຄັນ, ມີຈຸດສຸມຕິດພັນ ກັບ ມະຕິ, ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ.

ກອງປະຊຸມຄະນະປະຈຳ ຄະນະກຳມະການແນວລາວສ້າງຊາດ ເປີດກວ້າງ ເປີດຂຶ້ນປີລະເທື່ອ, ກ່ອນກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນ ຂອງສະພາປະຊາຊົນຂັ້ນແຂວງ.

ສຳລັບ ຄະນະປະຈຳ ສູນກາງແນວລາວສ້າງຊາດ ປະຊຸມເປີດກວ້າງ ໂດຍມີປະທານແນວລາວສ້າງຊາດເມືອງ ໃນທົ່ວປະເທດເຂົ້າຮ່ວມ ໃນສະໄໝໜຶ່ງ ຈະມີຢູ່ສອງຄັ້ງ ຄື: ກາງສະໄໝ ແລະ ທ້າຍສະໄໝ.

ສາມເດືອນໃດ ຄະນະປະຈຳຄະນະກຳມະການແນວລາວສ້າງຊາດແຕ່ລະຂັ້ນ ມີການຮັບສ່ອງແສງຈາກ ພາຄີ, ກຳມະການແນວລາວສ້າງຊາດ ໃນຂັ້ນຂອງຕົນ ແລະ ມີກອງປະຊຸມຮ່ວມກັບ ອົງການຈັດຕັ້ງພາຄີຂັ້ນຂອງຕົນ ເພື່ອແລກປ່ຽນບົດຮຽນ ໃນການເຄື່ອນໄຫວວຽກງານ.

**ມາດຕາ 42 ສິດ ແລະ ໜ້າທີ່ ກອງປະຊຸມຄະນະປະຈຳ**

ກອງປະຊຸມຄະນະປະຈຳ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຕີລາ, ປະເມີນຄືນ ການຈັດຕັ້ງປະຕິບັດແຜນການປະຈຳປີ ຂອງຄະນະປະຈຳ ແລະ ພິຈາລະນາ, ຮັບຮອງເອົາບົດສະຫຼຸບ ການເຄື່ອນໄຫວວຽກງານ ໜຶ່ງປີ ຜ່ານມາ, ທິດທາງໜ້າທີ່ວຽກງານໃນຕໍ່ໜ້າ ຂອງຄະນະປະຈຳຄະນະກຳມະການແນວລາວສ້າງຊາດ ຂັ້ນຂອງຕົນ;

2. ຄົ້ນຄວ້າ ແລະ ປຶກສາຫາລື ບັນຫາສຳຄັນຕ່າງໆ ກ່ຽວກັບວຽກງານແນວໂຮມ;

3. ລາຍງານ ກ່ຽວກັບການປັບປຸງ ບັນດາ ຮ່າງ ນິຕິກຳຕ່າງໆ ຂອງແນວລາວສ້າງຊາດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບ ຂັ້ນຂອງຕົນ;

4. ປະກອບຄຳເຫັນ ໃສ່ຮ່າງບົດລາຍງານ ຜົນຂອງການ ຕິດຕາມ ແລະ ໃຫ້ຄຳປຶກສາ ຂອງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຕໍ່ກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ;

5. ລາຍງານສະພາບ ກ່ຽວກັບ ການເຂົ້າຮ່ວມ ການແກ້ໄຂຂໍ້ຂັດແຍ່ງຕ່າງໆ ຕາມຄວາມຮັບຜິດຊອບ ຂອງຕົນ;

6. ຮັບຮອງເອົາມະຕິ ກອງປະຊຸມຄະນະປະຈຳຄະນະກຳມະການແນວລາວສ້າງຊາດ ຂັ້ນຂອງຕົນ.

**ມາດຕາ 43 ມະຕິກອງປະຊຸມ**

ກອງປະຊຸມໃຫຍ່, ກອງປະຊຸມສາມັນ, ກອງປະຊຸມວິສາມັນ ແລະ ກອງປະຊຸມຄະນະປະຈຳ ຕ້ອງມີມະຕິຮັບຮອງບັນຫາສຳຄັນ ທີ່ໄດ້ນຳມາພິຈາລະນາ.

ມະຕິກອງປະຊຸມ ຈະມີຄຸນຄ່າໃຊ້ໄດ້ກໍຕໍ່ເມື່ອມີຜູ້ແທນ ແລະ ກໍາມະການແນວລາວສ້າງຊາດ ທີ່ເຂົ້າຮ່ວມປະຊຸມຮັບຮອງເອົາ ເປັນຈໍານວນສຽງສ່ວນຫຼາຍ.

## ໝວດທີ VIII
## ການເງິນ ຂອງແນວລາວສ້າງຊາດ

**ມາດຕາ 44 ການເງິນ ຂອງແນວລາວສ້າງຊາດ**

ການເງິນ ຂອງແນວລາວສ້າງຊາດ ມີດັ່ງນີ້:

1. ງົບປະມານ;
2. ລາຍຮັບ;
3. ລາຍຈ່າຍ;
4. ຊັບສິນບັດ.

**ມາດຕາ 45 ງົບປະມານ ຂອງແນວລາວສ້າງຊາດ**

ງົບປະມານ ຂອງແນວລາວສ້າງຊາດ ຂັ້ນໃດ ແມ່ນ ຂຶ້ນກັບ ງົບປະມານ ຂອງອົງການບໍລິຫານລັດຂັ້ນນັ້ນ ເປັນຜູ້ຈັດສັນງົບປະມານໃຫ້.

**ມາດຕາ 46 ລາຍຮັບ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ແຕ່ລະຂັ້ນ ເປັນຜູ້ຄົ້ນຄວ້າທ່າແຮງຂອງຕົນ ດ້ວຍການນໍາສະເໜີ, ສ້າງໂຄງການ ແລະ ກິດຈະກໍາ ເພື່ອສ້າງລາຍຮັບ ຫຼື ໂດຍການຮ່ວມມື ກັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ກໍາມະການ ແລະ ຄູ່ຮ່ວມງານ ຂອງແນວລາວສ້າງຊາດ ທັງພາຍໃນ ແລະ ຕ່າງປະເທດ.

**ກ. ສູນກາງແນວລາວສ້າງຊາດ, ແນວລາວສ້າງຊາດ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ ແລະ ນະຄອນ ມີດັ່ງນີ້:**

1. ການຮ່ວມມື ສ້າງໂຄງການ, ຈັດກິດຈະກໍາຕ່າງໆ;
2. ກອງທຶນ ຂອງແນວລາວສ້າງຊາດ;
3. ລາຍຮັບວິຊາການ;
4. ການອຸປະຖໍາຊ່ວຍເຫຼືອ;
5. ລາຍຮັບອື່ນໆ ທີ່ຖືກຕ້ອງຕາມກົດໝາຍ.

**ຂ. ແນວລາວສ້າງຊາດບ້ານ ມີດັ່ງນີ້:**

1. ກອງທຶນພັດທະນາຂັ້ນບ້ານ ຫຼື ກອງທຶນແນວລາວສ້າງຊາດ;
2. ການອຸປະຖາຊ່ວຍເຫຼືອ ຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ທັງພາຍໃນ ແລະ ຕ່າງປະເທດ;
3. ຈັດກິດຈະກໍາຕ່າງໆ, ການເຄື່ອນໄຫວຫາລາຍໄດ້ອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 47 ລາຍຈ່າຍ ຂອງແນວລາວສ້າງຊາດ**

ລາຍຈ່າຍ ຂອງແນວລາວສ້າງຊາດ ມີດັ່ງນີ້:

1. ການເຄື່ອນໄຫວວຽກງານແນວໂຮມ, ການບໍລິຫານ, ປະຕິບັດນະໂຍບາຍຕ່າງໆ ຕາມລະບຽບການ.

2. ການສົ່ງເສີມວິຊາການ, ການລົງທຶນ, ໂຄງການກໍ່ສ້າງພື້ນຖານໂຄງລ່າງ ຕາມແຜນງານ, ໂຄງການ ແລະ ອື່ນໆ.

**ມາດຕາ 48 ຊັບສົມບັດ ຂອງແນວລາວສ້າງຊາດ**

ຊັບສົມບັດ ຂອງແນວລາວສ້າງຊາດ ແຕ່ລະຂັ້ນ ມີດັ່ງນີ້:

1. ລັດມອບໃຫ້;
2. ການຈັດຕັ້ງ, ບຸກຄົນ ຫຼື ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ມອບໃຫ້;
3. ສ້າງ ແລະ ຈັດຊື້ ດ້ວຍຕົນເອງ ຕາມ ກົດໝາຍ ແລະ ລະບຽບການ.

ຊັບສົມບັດ ຂອງແນວລາວສ້າງຊາດ ມີ ງົບປະມານ, ພາຫະນະ, ອຸປະກອນ, ຕຶກອາຄານ ຫຼື ສິ່ງປຸກສ້າງ, ສະຖານທີ່, ທີ່ດິນ ແລະ ອື່ນໆ.

**ມາດຕາ 49 ການຄຸ້ມຄອງການເງິນ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດແຕ່ລະຂັ້ນ ຄຸ້ມຄອງ ງົບປະມານ, ລາຍຮັບ, ລາຍຈ່າຍ ແລະ ຊັບສົມບັດຂອງຕົນ ຢ່າງລວມສູນ ຕາມ ກົດໝາຍງົບປະມານຂອງລັດ ແລະ ກົດລະບຽບສະບັບນີ້.

## ໝວດທີ IX
## ລະບອບ, ແບບແຜນ ວິທີເຮັດວຽກ

**ມາດຕາ 50 ລະບອບວິທີເຮັດວຽກ**

ແນວລາວສ້າງຊາດ ປະຕິບັດລະບອບວິທີເຮັດວຽກ ຕາມຫຼັກການຕື່ນຕົວ, ສະໝັກໃຈ, ປຶກສາຫາລື ຢ່າງມີປະຊາທິປະໄຕ ແລະ ເປັນເອກະພາບໃນການກະທຳ ສົມທົບຫຼັກການລວມສູນປະຊາທິປະໄຕ ກັບຫຼັກການປຶກສາຫາລືເພື່ອຄວາມເປັນເອກະພາບ.

ແນວລາວສ້າງຊາດ ຖືເອົາກອງປະຊຸມເປັນບ່ອນປຶກສາຫາລື ແລະ ເປັນເອກະພາບ ໃນການຕົກລົງບັນຫາສຳຄັນຕ່າງໆ.

ໃນການປະສານສົມທົບກັບພາຄີນັ້ນ ແນວລາວສ້າງຊາດເຄົາລົບຄວາມເປັນເອກະລາດ ໃນການເຄື່ອນໄຫວວຽກງານຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 51 ແບບແຜນວິທີເຮັດວຽກ**

ແນວລາວສ້າງຊາດເຮັດວຽກຢ່າງມີແຜນການ, ແບ່ງງານ, ແບ່ງຄວາມຮັບຜິດຊອບ, ມີການຊຸກຍູ້, ຕິດຕາມກວດກາ, ສະຫຼຸບ, ຖອດຖອນບົດຮຽນ, ປະຕິບັດລະບອບສ່ອງແສງລາຍງານ, ປະສານສົມທົບກັບການຈັດຕັ້ງຕ່າງໆ ແລະ ອົງການທີ່ກ່ຽວຂ້ອງ; ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມລະບຽບການ.

**ມາດຕາ 52 ການພົວພັນ ຂອງແນວລາວສ້າງຊາດ**

ການພົວພັນ ລະຫວ່າງ ສູນກາງແນວລາວສ້າງຊາດ ກັບ ອົງການຈັດຕັ້ງການເມືອງ ຂັ້ນສູນກາງ ແມ່ນ ການປະສານສົມທົບ ໃນການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ ເຂົ້າໃນການສ້າງ ແລະ ປັບປຸງ ແນວທາງຂອງພັກ, ນະໂຍບາຍ, ກົດລະບຽບ ແລະ ກົດໝາຍຂອງລັດ ທີ່ພົວພັນເຖິງ ວຽກງານລວມຂອງຊາດ, ຂອງສູນກາງແນວລາວສ້າງຊາດ ເພື່ອນຳສະເໜີ ຕໍ່ຄະນະເລຂາທິການ ແລະ ກົມການເມືອງສູນກາງພັກ.

ການພົວພັນ ລະຫວ່າງ ແນວລາວສ້າງຊາດ ຂັ້ນທ້ອງຖິ່ນ ກັບ ອົງການຈັດຕັ້ງການເມືອງ ຂັ້ນທ້ອງ ຖິ່ນ ແມ່ນ ການປະສານສົມທົບ ໃນການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ ໃນການປະຕິບັດນະໂຍບາຍ, ແຜນການພັດທະນາເສດຖະກິດ ແລະ ສັງຄົມ ແຫ່ງຊາດ, ບັນຫາສຳຄັນຕ່າງໆ ທີ່ພົວພັນເຖິງ ວຽກງານລວມ ຂອງທ້ອງຖິ່ນ ແລະ ຂອງແນວລາວສ້າງຊາດ ຂັ້ນທ້ອງຖິ່ນ ເພື່ອນຳສະເໜີ ຕໍ່ເລຂາຄະນະພັກຂັ້ນຂອງຕົນ.

ນອກຈາກ ການພົວພັນນີ້ແລ້ວ, ແນວລາວສ້າງຊາດ ຍັງມີການພົວພັນ ກັບພາກສ່ວນອື່ນ ຕາມທີ່ໄດ້ກຳນົດໄວ້ ຢູ່ໃນພາກທີ X, ມາດຕາ 51, 52, 53, 54, 55, 56 ຂອງກົດໝາຍວ່າດ້ວຍແນວລາວສ້າງຊາດສະບັບປັບປຸງ.

## ໝວດທີ X
## ວັນສ້າງຕັ້ງ, ທຸງ, ກາໝາຍ ແລະ ຕາປະທັບ ຂອງແນວລາວສ້າງຊາດ

**ມາດຕາ 53 ວັນສ້າງຕັ້ງແນວລາວສ້າງຊາດ**

ວັນສ້າງຕັ້ງແນວລາວສ້າງຊາດ ແມ່ນ ວັນທີ 13 ເດືອນ ສິງຫາ ປີ 1950. ໃນແຕ່ລະປີ ແນວລາວສ້າງຊາດແຕ່ລະຂັ້ນ ຮ່ວມກັບປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ຈັດຕັ້ງສະເຫຼີມສະຫຼອງວັນດັ່ງກ່າວ ເພື່ອເພີ່ມທະວີຄວາມສາມັກຄີປອງດອງທົ່ວປວງຊົນ, ຫວນຄືນເຖິງມູນເຊື້ອປະຫວັດສາດອັນສະຫງ່າອົງອາດ ແລະ ຜົນງານຂອງຕົນ.

**ມາດຕາ 54 ທຸງ ແລະ ກາໝາຍ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດມີທຸງແລະກາໝາຍ ຊຶ່ງຖືກຮັບຮອງເອົາໃນກອງປະຊຸມໃຫຍ່ຜູ້ແທນແນວລາວສ້າງຊາດທົ່ວປະເທດ.

ທຸງ ຂອງແນວລາວສ້າງຊາດ ມີ ພື້ນເປັນສີແດງ ຂະໜາດ 100X70 ຊມ, ມີເສັ້ນຜ່າກາງກາໝາຍແນວລາວສ້າງຊາດ 60 ຊມ, ກາໝາຍ ຈະຢູ່ຫ່າງຈາກເບື້ອງເທິງສຸດ ຂອງທຸງ ຕາມລວງຍາວ 10 ຊມ.

ກາໝາຍ ຂອງແນວລາວສ້າງຊາດ ມີເອກະລັກຂອງຕົນ ຄື: ເປັນຮູບວົງມົນແບບດວງຈັນ, ມີທຸງຊາດລາວຕັ້ງຢູ່ດ້ານເທິງສຸດ, ຮູບທາດຫຼວງຕັ້ງຢູ່ເຄິ່ງກາງ, ຮູບກົງຈັກເຄິ່ງວົງມົນ ຢູ່ກ້ອງທາດຫຼວງ, ຮູບຮວງເຂົ້າຢູ່ສອງຟາກຂ້າງ, ຮູບປຶ້ມຂຽວ ແລະ ປາກກາປີກນົກ ຢູ່ກ້ອງກົງຈັກດ້ານລຸ່ມຂອງຮວງເຂົ້າ ຊຶ່ງມີຕົວອັກສອນ ຂຽນວ່າ "ແນວລາວສ້າງຊາດ".

ກາໝາຍ ຂອງແນວລາວສ້າງຊາດ ແມ່ນສັນຍາລັກ ແຫ່ງຄວາມສາມັກຄີ ເປັນເອກະພາບ ໃນວົງຄະນາຍາດແຫ່ງຊາດ ບົນພື້ນຖານພັນທະພາບກຳມະກອນ, ຊາວກະສິກອນ, ນັກຮຽນຮູ້ປັນຍາຊົນ ໂດຍແມ່ນພັກປະຊາຊົນ ປະຕິວັດລາວ ເປັນແກນນຳ, ເປັນຄັນທຸງ ຊີ້ນຳນຳພາ.

**ມາດຕາ 55 ຕາປະທັບ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ແຕ່ລະຂັ້ນ ມີຕາປະທັບ ຄະນະກຳມະການແນວລາວສ້າງຊາດ ຂັ້ນຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

ສຳລັບ ການຄຸ້ມຄອງ, ນຳໃຊ້ ຕາປະທັບ ຂອງແນວລາວສ້າງຊາດ ແມ່ນ ໃຫ້ອີງໃສ່ດຳລັດວ່າດ້ວຍ ຕາປະທັບ ຂອງລັດຖະບານ ສະບັບເລກທີ 322/ລບ, ລົງວັນທີ 01 ເດືອນ ຕຸລາ ປີ 2018.

## ໝວດທີ XI
## ການຍ້ອງຍໍ ແລະ ການປະຕິບັດວິໄນ

**ມາດຕາ 56 ການຍ້ອງຍໍ**

ກຳມະການ, ຄູ່ຮ່ວມງານ, ພະນັກງານ ແລະ ລັດຖະກອນ ຂອງແນວລາວສ້າງຊາດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການເຄື່ອນໄຫວວຽກງານແນວໂຮມ ຈະໄດ້ຮັບ ນະໂຍບາຍ, ຍ້ອງຍໍ ລະດັບຕ່າງໆ ຕາມ ກົດໝາຍ ແລະ ລະບຽບການ.

**ມາດຕາ 57 ການປະຕິບັດວິໄນ**

ກຳມະການ, ຄູ່ຮ່ວມງານ, ພະນັກງານ ແລະ ລັດຖະກອນ ຂອງແນວລາວສ້າງຊາດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດ ຕໍ່ ກົດໝາຍ ແລະ ກົດລະບຽບ ຂອງແນວລາວສ້າງຊາດ ຈະຖືກປະຕິບັດວິໄນ ຕາມກໍລະນີ ເບົາ ຫຼື ໜັກ.

## ໝວດທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 58 ການຈັດຕັ້ງປະຕິບັດ**

ຄະນະກຳມະການ, ຄະນະປະຈຳແນວລາວສ້າງຊາດ ທຸກຂັ້ນ ແນະນຳ, ຜັນຂະຫຍາຍ ໃນການຈັດຕັ້ງປະຕິບັດກົດລະບຽບສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 59 ຜົນສັກສິດ**

ມີແຕ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຂອງແນວລາວສ້າງຊາດເທົ່ານັ້ນ ຈຶ່ງມີສິດຮັບຮອງເອົາການປ່ຽນແປງກົດລະບຽບ ແນວລາວສ້າງຊາດ.

ກົດລະບຽບສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ່ກອງປະຊຸມ ໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງແນວລາວສ້າງຊາດ ໄດ້ຮັບຮອງເອົາເປັນຕົ້ນໄປ.

**ນະຄອນຫຼວງວຽງຈັນ, ວັນທີ 25/11/2021**

**ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງແນວລາວສ້າງຊາດ**